# ບັນທຶກຄວາມເຂົ້າໃຈ ( Memorandum of Understanding : MOU )
# ສະບັບທີ 3 ປະຈຳປີ ຄສ 2024
# ເລື່ອງ ການຮ່ວມມືດ້ານສາທາລະນະສຸກລະດັບທ້ອງຖິ່ນ
# ລະຫວ່າງ
# ພະແນກສາທາລະນະສຸກແຂວງສະຫັວນນະເຂດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
# ກັບ
# ສຳນັກງານສາທາລະນະສຸກຈັງຫັວດມຸກດາຫານ ແຫ່ງ ຣາຊອານາຈັກໄທ

ແຂວງສະຫັວນນະເຂດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ທີ່ມີຊາຍແດນຕິດ ກັບ ຈັງຫັວດມຸກດາຫານ ຣາຊອານາຈັກໄທ, ປະຊາຊົນທັງສອງຝ່າຍເດີນທາງໄປມາຫາສູ່ຢ່າງສະດວກສະບາຍ ເພື່ອທຳການຄ້າຂາຍ ການຂົນສົ່ງ ການທ່ອງທ່ຽວ ລວມທັງການຢ້ຽມຍາມຍາດຕິພີ່ນ້ອງ ມີການຮ່ວມມືຊ່ວຍເຫຼືອ ສະໜັບສະໜູນເຊິ່ງກັນ ແລະ ກັນ ໃນການດຳເນີນວຽກງານດ້ານຕ່າງໆ ລວມທັງດ້ານສາທາລະນະສຸກຢ່າງຕໍ່ເນື່ອງ ແລະ ກົດລະບຽບສາກົນດ້ານສາທາລະນະສຸກລະຫວ່າງປະເທດ ປີ 2005 (International Health Regulations 2005: IHR 2005) ຂອງອົງການອະນາໄມໂລກໄດ້ກຳນົດໃຫ້ປະເທດສາມາຊິກດຳເນີນການປະເມີນ ແລະ ພັດທະນາໜ່ວຍງານສາທາລະນະສຸກ ໃນການເຝົ້າລະວັງ ແລະ ປ້ອງກັນຄວບຄຸມພະຍາດຕິດຕໍ່ ເຊິ່ງລວມເຖິງການກັ່ນກອງຜູ້ເດີນທາງ ຍານພາຫະນະ ແລະ ສິນຄ້າທີ່ເຂົ້າ ແລະ ອອກ ຜ່ານຊາຍແດນ ລວມທັງລະບຽບ ແລະ ກົດໝາຍທີ່ແຕ່ລະປະເທດໄດ້ກຳນົດໄວ້. ຈັງຫັວດມຸກດາຫານ ແລະ ແຂວງສະຫັວນນະເຂດໄດ້ດຳເນີນການຮ່ວມມືໂຄງການເຝົ້າລະວັງພະຍາດປະເທດເຂດລຸ່ມແມ່ນ້ຳຂອງ (Mekong Basin Disease Surveillance : MBDS) ຮ່ວມກັນມາຕັ້ງແຕ່ ປີ ຄສ 2004 ຈົນເຖິງປະຈຸບັນໃນລະຫວ່າງປີ ຄສ 2021-2023 ມີການລະບາດພະຍາດຂອງພະຍາດໂກໂຣນາໄວຣັດ 2019 (COVID-19 pandemic) ເຊິ່ງມີການດຳເນີນການຮ່ວມມືການເຝົ້າລະວັງ ແລະ ປ້ອງກັນຄວບຄຸມພະຍາດຕາມຊາຍແດນລະຫວ່າງແຂວງສະຫັວນນະເຂດ ແລະ ຈັງຫັວດມຸກດາຫານມາຢ່າງຕໍ່ເນື່ອງພາຍໃຕ້ສະພາບແວດລ້ອມ ຕາມມາດຕະການປ້ອງກັນຄວບຄຸມການແຜ່ລະບາດຂອງພະຍາດ COVID- 19 ຂອງທັງສອງປະເທດຢ່າງເຂັ້ມງວດ;

ດັ່ງນັ້ນ, ເພື່ອສົ່ງເສີມສະໜັບສະໜູນໃຫ້ການຮ່ວມມືໃນການດຳເນີນວຽກງານດ້ານສາທາລະນະສຸກ ແລະ ວຽກງານເຝົ້າລະວັງ ປ້ອງກັນ ແລະ ຄວບຄຸມພະຍາດຕິດຕໍ່ລະຫວ່າງປະເທດທີ່ມີຢູ່ໃນປະຈຸບັນ ເປັນໄປຢ່າງຕໍ່ເນື່ອງ ມີປະສິດທິພາບ ແລະ ເປັນຮູບປະທຳສາມາດນຳໄປສູ່ການປະຕິບັດທີ່ແທ້ຈິງໂດຍໜ່ວຍງານທີ່ກ່ຽວຂ້ອງ ເພື່ອສົ່ງເສີມຄວາມສຳພັນ ແລະ ມິດຕະພາບອັນດີ ລະຫວ່າງໜ່ວຍງານ ບຸກຄະລາກອນທີ່ກ່ຽວຂ້ອງ ແລະ ປະຊາຊົນຂອງທັງສອງຝ່າຍ ຄື ແຂວງສະຫັວນນະເຂດ ແລະ ຈັງຫັວດມຸກດາຫານໃຫ້ມີຄວາມຍືນຍົງ, ຈິ່ງໄດ້ຕົກລົງທີ່ຈະມີການຮ່ວມມືດ້ານສາທາລະນະສຸກຮ່ວມກັນດັ່ງຕໍ່ໄປນີ້:

1. ແລກປ່ຽນຂໍ້ມູນ 18 ພະຍາດຕາມໂຄງການຮ່ວມມືການເຝົ້າລະວັງພະຍາດປະເທດເຂດລຸ່ມແມ່ ນ້ຳຂອງ (Mekong Basin Disease Surveillance, MBDS), ພະຍາດ COVID-19, Melioidosis, ພະຍາດຕິດຕໍ່ຕາມ IHR, ການກັ່ນກອງຜູ້ເດີນທາງຜ່ານດ່ານ (Screening at Quarantine) ແລະ ກິດຈະກຳການດຳເນີນ ວຽກງານຜ່ານ Website www.MSQ-Health.com

2. ພັດທະນາຄວາມສາມາດບຸກຄະລາກອນທີ່ກ່ຽວຂ້ອງທຸກລະດັບໃນການເຝົ້າລະວັງ ແລະ ການປ້ອງກັນຄວບຄຸມພະຍາດຕິດຕໍ່ລວມເຖິງການເຝົ້າລະວັງສຸຂະພາບໜຶ່ງດຽວ (One Health), IHR ລະຫວ່າງປະເທດ ແຂວງສະຫວັນນະເຂດ - ຈັງຫວັດມຸກດາຫານ
3. ຝຶກຊ້ອມແຜນລະຫວ່າງປະເທດໂຕ້ຕອບພາວະສຸກເສີນດ້ານສາທາລະນະສຸກ ແລະ ຜົນກະທົບທາງດ້ານສຸຂະພາບຮ່ວມກັນຢ່າງຕໍ່ເນື່ອງ
4. ຮ່ວມມືໃນການປິ່ນປົວ ສົ່ງຕໍ່ຄົນເຈັບ ລະຫວ່າງປະເທດ ແລະ ການໂຕ້ຕອບພາວະສຸກເສີນດ້ານສາທາລະນະສຸກ ແລະ ຜົນກະທົບທາງດ້ານສຸຂະພາບ ລວມເຖິງອຸບັດຕິເຫດຈຳນວນຫລາຍ ທີ່ອາດເກີດຂຶ້ນລະຫວ່າງປະເທດ, ແຂວງສະຫວັນນະເຂດ - ຈັງຫວັດມຸກດາຫານ

ບັນທຶກຄວາມເຂົ້າໃຈ (MOU) ສະບັບນີ້ມີຜົນສັກສິດນັບຕັ້ງແຕ່ ວັນທີທັງສອງຝ່າຍໄດ້ລົງລາຍເຊັນໃນບັນທຶກຂໍ້ຕົກລົງການຮ່ວມມືເປັນຕົ້ນໄປເປັນໄລຍະ 05 ປີ ເຖິງວັນທີ 6 ມິນາ 2029 ພ້ອມນີ້ສາມາດ ປັບປຸງປ່ຽນແປງ ແກ້ໄຂ ເພີ່ມເຕີມບັນທຶກ ໄດ້ຕາມສະຖານະການ ແລະ ຕາມການຕົກລົງຮ່ວມກັນຂອງທັງສອງຝ່າຍ

ບັນທຶກຄວາມເຂົ້າໃຈ ສະບັບນີ້, ຈັດຂຶ້ນທີ່ພະແນກສາທາລະນະສຸກແຂວງສະຫ້ວນນະເຂດ ຄັ້ງວັນທີ 6 ມິນາ 2024 ເປັນສອງພາສາໄດ້ແກ່ພາສາລາວ ແລະ ພາສາໄທ ໂດຍມີຄຸນຄ່າເທົ່າທຽມກັນທັງສອງສະບັບ.

ຫົວໜ້າຄະນະຜູ້ແທນສາທາລະນະສຸກຝ່າຍໄທ
ຈັງຫວັດມຸກດາຫານ
ຣາຊອານາຈັກໄທ

(ນາຍມະຣົງ ຈັນແກ້ວ)
ນາຍແພດສາທາລະນະສຸກຈັງຫວັດມຸກດາຫານ
ວັນທີ 6 ມິນາ 2024

ຫົວໜ້າຜູ້ແທນສາທາລະນະສຸກຝ່າຍລາວ
ແຂວງສະຫວັນນະເຂດ
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

(ປທ ດຣ ແສງດາວ ສິດາໄລ)
ຫົວໜ້າພະແນກສາທາລະນະສຸກແຂວງສະຫວັນນະເຂດ
ວັນທີ 6 ມິນາ 2024